# ການບໍລິຫານວຽກງານວິຊາການ ຂອງໂຮງຮຽນມັດທະຍົມສົມບູນ ພາຍໃນເມືອງເລົ່າງາມ ແຂວງສາລະວັນ

*ໄຊຍະເດດ ແກ້ວພູທີງ[1] , ຄຳແສງ ທະລັງສີ[2], ສອນເພັດ ສີສຸລາດ[3], ພູມໃຈ ວົງວິໄສ[4]*

*ຄະນະສຶກສາສາດ ມະຫາວິທະຍາໄລ ຈຳປາສັກ*

## ບົດຄັດຫຍໍ້

ການຄົ້ນຄວ້າຄັ້ງນີ້ໄດ້ມີຈຸດປະສົງ: 1) ເພື່ອສຶກສາສະພາບການບໍລິຫານວຽກງານວິຊາການ ຂອງໂຮງຮຽນມັດທະຍົມສົມບູນ ພາຍໃນເມືອງເລົ່າງາມ ແຂວງສາລະວັນ. 2) ເພື່ອປຽບທຽບຄວາມຄິດເຫັນຂອງຜູ້ບໍລິຫານ ແລະ ຄູສອນ ກ່ຽວກັບການບໍລິຫານວຽກງານວິຊາການ ຂອງໂຮງຮຽນມັດທະຍົມສົມບູນ ພາຍໃນເມືອງເລົ່າງາມ ແຂວງສາລະວັນ ໂດຍຈຳແນກຕາມເພດ, ໜ້າທີ່, ວຸດທິການສຶກສາ ແລະ ປະສົບການເຮັດວຽກ. 3) ເພື່ອສຶກສາແນວທາງໃນການບໍລິຫານວຽກງານວິຊາການ ຂອງໂຮງຮຽນມັດທະຍົມສົມບູນ ພາຍໃນເມືອງເລົ່າງາມ ແຂວງສາລະວັນ. ກຸ່ມຕົວຢ່າງໃນການຄົ້ນຄວ້າຄັ້ງນີ້ແມ່ນກຸ່ມຜູ້ບໍລິຫານຈຳນວນ 24 ຄົນ ແລະ ຄູສອນ  ຈຳນວນ 145 ຄົນ ຈາກໂຮງຮຽນມັດທະຍົມສົມບູນ ພາຍໃນເມືອງເລົ່າງາມ ແຂວງສາລະວັນ ການວິເຄາະຂໍ້ມູນແມ່ນນຳໃຊ້ໂປຣແກຣມສຳເລັດຮູບ (SPSS).ຜົນການສຶກສາພົບວ່າ:

1. ການບໍລິຫານວຽກງານວິຊາການຂອງໂຮງຮຽນມັດທະຍົມສົມບູນ ພາຍໃນເມືອງເລົ່າງາມ ແຂວງສາລະວັນ. ໂດຍລວມຢູ່ໃນລະດັບຫຼາຍ.

2. ຜົນການປຽບທຽບຄວາມຄິດເຫັນຂອງຜູ້ບໍລິຫານ ແລະ ຄູສອນ ກ່ຽວກັບການບໍລິຫານວຽກງານວິຊາການ ຂອງໂຮງຮຽນມັດທະຍົມສົມບູນ ພາຍໃນເມືອງເລົ່າງາມ ແຂວງສາລະວັນ ໂດຍຈຳແນກຕາມເພດ, ໜ້າທີ່, ວຸດທິການສຶກສາ ແລະ ປະສົບການເຮັດວຽກພົບວ່າ:  1) ຄວາມຄິດເຫັນຂອງຜູ້ບໍລິຫານ ແລະ ຄູສອນ ຈຳແນກຕາມເພດ ພົບວ່າ ໂດຍລວມແມ່ນມີຄວາມຄິດເຫັນບໍ່ແຕກຕ່າງກັນຢ່າງມີຄວາມສຳຄັນທາງສະຖິຕິທີ່ລະດັບ 0.05. 2) ຄວາມຄິດເຫັນຂອງຜູ້ບໍລິຫານ ແລະ ຄູສອນຈຳແນກຕາມໜ້າທີ່ ພົບວ່າ ໂດຍລວມແມ່ນມີຄວາມຄິດເຫັນບໍ່ແຕກຕ່າງກັນຢ່າງມີຄວາມສຳຄັນທາງສະຖິຕິທີ່ລະດັບ 0.05. 3) ຄວາມຄິດເຫັນຂອງຜູ້ບໍລິຫານ ແລະ ຄູສອນຈຳແນກຕາມວຸດທິ ພົບວ່າ ໂດຍລວມແມ່ນມີຄວາມຄິດເຫັນແຕກຕ່າງກັນ ຢ່າງມີຄວາມສຳຄັນທາງສະຖິຕິທີ່ລະດັບ 0.05 ແລະ 4) ຄວາມຄິດເຫັນຂອງຜູ້ບໍລິຫານ ແລະ ຄູສອນຈຳແນກຕາມປະສົບການ ພົບວ່າ ໂດຍລວມແມ່ນມີຄວາມຄິດເຫັນແຕກຕ່າງກັນ ຢ່າງມີຄວາມສຳຄັນທາງສະຖິຕິທີ່ລະດັບ 0.05

3. ແນວທາງປັບປຸງການບໍລິຫານວຽກງານວິຊາການຂອງໂຮງຮຽນມັດທະຍົມສົມບູນ ພາຍໃນເມືອງເລົ່າງາມ ແຂວງສາລະວັນຕາມ 5 ດ້ານ ມີຄື: ໂຮງຮຽນຕ້ອງໄດ້ເອົາໃຈໃສ່ຕື່ມໃນການຈັດຝຶກອົບຮົມຄູໃນແຕ່ລະປີ ເພື່ອໃຫ້ຄູໄດ້ເອົາໃຈໃສ່ພັດທະນາທາງດ້ານການຈັດການຮຽນ-ການສອນ, ຄູແຕ່ລະຄົນກ່ອນຈະຂຶ້ນຫ້ອງສອນ ຕ້ອງໄດ້ກະກຽມສື່ການຮຽນ-ການ

---

[1] *ນັກສຶກສາປະລິນຍາໂທ ສາຂາວິທະຍາສາດການສຶກສາ ຄະນະສຶກສາສາດ ມະຫາວິທະຍາໄລຈຳປາສັກ*

[2] *ມະຫາວິທະຍາໄລແຫ່ງຊາດ*

[3] *ຄະນະສຶກສາສາດ ມະຫາວິທະຍາໄລຈຳປາສັກ*

[4] *ຄະນະສຶກສາສາດ ມະຫາວິທະຍາໄລຈຳປາສັກ*

ສອນໃຫ້ຄົບຖ້ວນ,  ຄູຄວນໃຊ້ວິທີການວັດ ແລະ ສິ່ງຜົນການວັດໃຫ້ພໍ່ແມ່ຜູ້ປົກຄອງນັກຮຽນຮັບຮູ້ທຸກໆ ເດືອນ ແລະ ໂຮງຮຽນຕ້ອງສົ່ງເສີມໃຫ້ຄູສອນໄດ້ເຂົ້າຮ່ວມໂມງສອນ ເຊິ່ງກັນ ແລະ ກັນໃຫ້ຫຼາຍຂຶ້ນ.

**ຄໍາສັບສໍາຄັນ:** ການບໍລິຫານວຽກວິຊາການ; ຜູ້ບໍລິຫານ; ອາຈານສອນ.

# Aacademic Affaires Adminstration of Secondary Schools in Saravan Province

**Abstrac**

The purposes of this research were: 1) to study the state of administration of the academic work of secondary schools in Laongam District, Saravan Province. 2) to compare the opinions of administrators and teachers regarding the administration of academic affairs of comprehensive secondary schools in Laongam District, Saravan Province by distinguishing according to gender, duties, educational qualifications and work experience. 3) to study how to manage the academic affairs of secondary schools in Laongam District, Saravan Province. The sample group in this research were a group of 24 administrators and 145 teachers from a Secondary School in Laongam District, Saravan Province. The tools used to collect data was a 5-level evaluation questionnaire, data analysis using a complete program (SPSS).

The result of this research were:

1) The academic affairs work's Administration of the comprehensive high school in in Laongam District, Saravan Province overall at a very high level.

2) Comparing the opinions of administrators and teachers regarding the academic affairs work's Administration of comprehensive Secondary Schools in Laongam District, Saravan Province by distinguishing according to gender, duties, educational qualifications and work experience as follows: The opinions of the administrators and teachers discriminated by gender, it was found that: Overall, there is no statistically significant difference at the 0.05 level. The opinions of administrators and teachers according to their duties. It was found that: the opinions of administrators and teachers as a whole are not statistically significantly different at the 0.05 level. The opinions of administrators and teachers differ according to qualifications with statistical significance at the 0.05 level. The opinions of administrators and teachers based on overall experience are found to have different opinions with statistical significance at the 0.05 level.

3) The way to improve the academic affairs work's administration of Secondary Schools in Laongam District, Saravan Province in 5 aspects are as follows: schools must pay attention to teaches training every year so that teachers can pay attention to the development of teaching and learning management. Each teacher before having the classroom must prepare the teaching and learning materials. Teachers should use the measurement method and send the measurement results to the parents and guardians of the students every month and the school should encourage the teachers to participate in each other's lessons more.

**Key words:** Administration of the academic work; Administrators; Teachers.

**1 ພາກສະເໜີ**

ລັດຖະບານແຫ່ງສາທາລະນະລັດປະຊາທິປະໄຕປະຊາຊົນລາວ ໄດ້ກຳນົດວິໄສທັດການພັດທະນາການສຶກສາ ແລະ ກິລາ ຮອດປີ 2030 ດັ່ງນີ້: ຊັບພະຍາກອນມະນຸດໄດ້ຮັບການພັດທະນາໃຫ້ມີຄຸນນະພາບໃກ້ຄຽງກັບພາກພື້ນ ແລະ ສາກົນ, ເປັນກຳລັງການຜະລິດທີ່ເຂັ້ມແຂງ, ຕອບສະໜອງໄດ້ຄວາມຕ້ອງການຂອງການພັດທະນາເສດຖະກິດ - ສັງຄົມແຫ່ງຊາດຫຼາຍຂຶ້ນ, ລະດັບການສຶກສາທົ່ວໄປຂອງພົນລະເມືອງລາວຈົບຊັ້ນມັດທະຍົມຕອນປາຍ, ປະຊາຊົນໄດ້ຮັບການບໍລິການດ້ານສາທາລະນະສຸກທີ່ມີຄຸນນະພາບຢ່າງທົ່ວເຖິງ ແລະ ມີອາຍຸຍືນສະເລ່ຍສູງກວ່າ 75 ປີ ບົນພື້ນຖານວິໄສທັດ ແລະ ຍຸດທະສາດທີ່ລັດຖະບານກຳໜົດ ກະຊວງສຶກສາທິການ ແລະ ກິລາ ຈຶ່ງໄດ້ກຳໜົດວິໄສທັດ ດັ່ງນີ້ ຮອດປີ 2030 ພົນລະເມືອງລາວທຸກຄົນໄດ້ຮັບການສຶກສາທີ່ມີຄຸນນະພາບຢ່າງສະເໝີພາບ ແລະ ເທົ່າທຽມກັນ ເພື່ອໃຫ້ເຂົາເຈົ້າໄດ້ພັດທະນາຕົນເອງ ກາຍເປັນພົນລະເມືອງດີຂອງຊາດ, ມີຄຸນສົມບັດ, ມີສຸຂະພາບແຂງແຮງ, ມີຄວາມຮູ້ຄວາມສາມາດສູງ, ມີຄວາມເປັນມືອາຊີບ ເພື່ອພັດທະນາປະເທດຊາດໃຫ້ສີວິໄລຍືນຍົງ, ສາມາດເຊື່ອມຍົງ, ແຂ່ງຂັນກັບພາກພື້ນ ແລະ ສາກົນໄດ້ (ກະຊວງສຶກສາທິການ ແລະ ກິລາ, 2015:9). ສະນັ້ນ, ຈຸດປະສົງລວມຂອງແຜນພັດທະນາຂະແໜງການສຶກສາ ແລະ ກິລາ ແມ່ນແນໃສ່ພັດທະນາລະບົບການສຶກສາ ເພື່ອສ້າງຊັບພະຍາກອນມະນຸດໃຫ້ມີຄວາມຮູ້, ຄວາມສາມາດ, ມີຄຸນສົມບັດສິນທຳປະຕິວັດ ແລະ ມີຄ່ານິຍົມທີ່ຖືກຕ້ອງ, ມີນ້ຳໃຈຮັກປະເທດຊາດ, ຊື່ສັດບໍລິສຸດ, ມີລະບຽບວິໄນ, ມີສຸຂະພາບທາງດ້ານຮ່າງກາຍ ແລະ ຈິດໃຈທີ່ດີ, ມີຄວາມສາມັກຄີພາຍໃນຊາດ, ມີຄວາມຮັກຕໍ່ການຮຽນຮູ້ຕະຫຼອດຊີວິດ, ມີຄ່ານິຍົມຕໍ່ປະເພນີອັນດີງາມຂອງຊາດ, ຮັກຄວາມກ້າວ ໜ້າ ແລະ ມີວິທະຍາສາດ ເພື່ອໃຫ້ກາຍເປັນກຳລັງແຮງງານທີ່ມີຄຸນນະພາບ, ສອດຄ່ອງ ແລະ ສາມາດຕອບສະໜອງກັບຄວາມຮຽກຮ້ອງຕ້ອງການ ຂອງການຂະຫຍາຍຕົວທາງດ້ານເສດຖະກິດຂອງຊາດທີ່ຍືນຍົງ, ມີມີຄວາມພ້ອມທີ່ຈະຮ່ວມມື ແລະ ແຂ່ງຂັນກັບບັນດາປະເທດໃນພາກພື້ນ. ກະຊວງສຶກສາທິການ ແລະ ກິລາ (2020:17).

ການບໍລິຫານວຽກງານວິຊາການໂຮງຮຽນ ມີຄວາມໝາຍອັນສຳຄັນເລິກເຊິ່ງ ຕໍ່ການສ້າງສາພັດທະນາປະເທດຊາດ, ເພາະການພັດທະນາບ້ານເມືອງນັ້ນ ມັນຮຽກຮ້ອງໃຫ້ມີຄົນທີ່ມີລະດັບການສຶກສາທີ່ແນ່ນອນ, ຮຽກຮ້ອງໃຫ້ມີຄົນທີ່ມີຄວາມຮູ້, ຄວາມສາມາດ, ມີປະສົບການ, ມີຫົວຄິດປະດິດສ້າງ ແຕ່ຖ້າຢາກໄດ້ແນວນັ້ນແມ່ນຕ້ອງໄດ້ເອົາໃຈໃສ່ໃນການບໍລິຫານວຽກງານວິຊາການທີ່ເປັນຫົວຈັກຫຼັກແຫຼ່ງ, ເປັນບ່ອນກຳນົດການຈັດຕັ້ງປະຕິບັດໂຄງການຫຼັກສູດການຮຽນ-ການສອນຂອງໂຮງຮຽນ. ເມື່ອອີງໃສບົດສະຫຼຸບການຈັດຕັ້ງປະຕິບັດແຜນພັດທະນາການສຶກສາ ຂອງກະຊວງສຶກສາທິການ ແລະ ກິລາ, ພະແນກສຶກສາທິການ ແລະ ກິລາ ແຂວງສາລະວັນ ແລະ ຂອງຫ້ອງການສຶກສາທິການ ແລະ ກິລາ ເມືອງເລົ່າງາມໃນໄລຍະຜ່ານ ເຫັນວ່າຍັງມີດ້ານອ່ອນ ແລະ ຂໍ້ຄົງຄ້າງເປັນຕົ້ນ: ການຈັດຕັ້ງປະຕິບັດຫຼັກສູດການຮຽນ-ການສອນ ບໍ່ເປັນລະບົບ ແລະ ບໍ່ຕໍ່ເນື່ອງ, ຄູສອນຈຳນວນໜຶ່ງບໍ່ເອົາໃຈໃສ່ຕໍ່ການສິດສອນ, ສອນຫຼາຍຕຳລາ, ຫຼາຍຂັ້ນຮຽນ, ການຈັດການຮຽນ-ການສອນຂອງຄູ ສ່ວນຫຼາຍບໍ່ໃຊ້ຮູບແບບການສອນທີ່ຫຼາກຫຼາຍ, ການຮຽນທິດສະດີບໍ່ໄດ້ຄວບຄູ່ກັບການປະຕິບັດຕົວຈິງ ເນື່ອງຈາກວ່າຫຼາຍໂຮງຮຽນ ຍັງບໍ່ມີອຸປະກອນການຮຽນ-ການສອນ, ຜູ້ບໍລິຫານໂຮງຮຽນຈຳນວນໜຶ່ງ ປະຕິບັດໜ້າທີ່ໃນການຕິດຕາມ, ໃກ້ຊິດຕິດແທດ ແລະ ຊຸກຍູ້ ການສອນຂອງຄູບໍ່ໄດ້ດີເທົ່າທີ່ຄວນ; ປະມານເຄິ່ງໜຶ່ງຂອງຄູ ບໍ່ເຄີຍເຫັນຄູສຶກສານິເທດ ແລະ ຜູ້ອຳນວຍການໂຮງຮຽນມາເຂົ້າຮ່ວມໂມງສອນ ແລະ ໃຫ້ການແນະນຳກ່ຽວກັບການສອນ, ຄູສອນຈຳນວນໜຶ່ງສອນບໍ່ຖືກວຸດທິ, ບໍ່ຖືກວິຊາທີ່

ຮຽນຈົບມາ, ຄວາມຮູ້ຄວາມສາມາດຈຳກັດ, ສອນບາງຂັ້ນຮຽນບໍ່ໄດ້, ຄູນິເທດຊັ້ນມັດທະຍົມຈຳນວນໜຶ່ງບໍ່ພັດທະນາຕົນເອງ ເຮັດໃຫ້ຄວາມຮູ້, ຄວາມສາມາດຍັງຈຳກັດ, ລົງໃຫ້ການນິເທດໃນໂຮງຮຽນບໍ່ໄດ້ດີ, ຍັງບໍ່ເປັນທີ່ຍອມຮັບຂອງຜູ້ທີ່ໄດ້ຮັບການນິເທດ ພ້ອມດຽວກັນນັ້ນການລົງນິເທດຍັງບໍ່ເປັນລະບົບ ແລະ ບໍ່ຕໍ່ເນື່ອງ (ກະຊວງສຶກສາທິການ ແລະ ກິລາ 2021: 36-37).

ຕໍ່ສະພາບດັ່ງທີ່ກ່າວມາຂ້າງເທິງນັ້ນ, ຈຶ່ງເຮັດໃຫ້ຜູ້ຄົ້ນຄວ້າມີຄວາມສົນໃຈຢາກສຶກສາກ່ຽວກັບການບໍລິຫານວຽກງານວິຊາການຂອງໂຮງຮຽນມັດທະຍົມສຶກສາສົມບູນ ພາຍໃນເມືອງເລົ່າງາມ ແຂວງສາລະວັນ ສົກຮຽນ 2021-2022. ຜົນທີ່ໄດ້ຮັບຈາກການສຶກສາໃນຄັ້ງນີ້ ຈະເປັນຂໍ້ມູນພື້ນຖານສຳລັບຜູ້ບໍລິຫານນຳໄປໃຊ້ໃນການບໍລິຫານໂຮງຮຽນມັດທະຍົມສຶກສາ ໃຫ້ດີຂຶ້ນເທື່ອລະກ້າວ.

## 2 ວິທີການດຳເນີນການຄົ້ນຄວ້າ

### 2.1 ການອອກແບບການສຶກສາ, ການຄັດເລືອກພື້ນທີ, ໄລຍະເວລາຄົ້ນຄວ້າ

#### 2.1.1 ການອອກແບບການສຶກສາ

ການສຶກສາຄົ້ນຄວ້າຄັ້ງນີ້ ເປັນການສຶກສາກ່ຽວກັບສະພາບການບໍລິຫານວຽກງານວິຊາການຂອງໂຮງຮຽນມັດທະຍົມສົມບູນ ພາຍໃນເມືອງເລົ່າງາມ ແຂວງສາລະວັນ ແມ່ນເປັນການສຶກສາແບບສຳຫຼວດ, ເຄື່ອງມືທີ່ໃຊ້ລວບລວມຂໍ້ມູນເປັນແບບສອບຖາມມາດຕາສ່ວນປະເມີນຄ່າ 5 ລະດັບ, ການວິເຄາະຂໍ້ມູນໂດຍໃຊ້ໂປຣແກຣມສຳເລັດຮູບ (SPSS) ເພື່ອຫາຄ່າຄວາມຖີ່, ຄ່າສ່ວນຮ້ອຍ, ຄ່າສະເລ່ຍ, ຄ່າຜັນປ່ຽນມາດຕະຖານ ແລະ ທົດສອບຄວາມແຕກຕ່າງໂດຍໃຊ້ສະຖິຕິ T(t-test ) ແລະ F(f-test)

#### 2.1.2 ການຄັດເລືອກພື້ນທີ

ການເກັບກຳຂໍ້ມູນ ແມ່ນເອົາໂຮງຮຽນມັດທະຍົມສຶກສາສົມບູນພາຍໃນເມືອງເລົ່າງາມ ມີ 8 ໂຮງຮຽນມັດທະຍົມສຶກສາສົມບູນຄື: ໂຮງຮຽນມັດທະຍົມສຶກສາສົມບູນເລົ່າງາມ, ໜອງແກ, ວັງເປືອຍ, ດົງໃຫຍ່, ເດະເຊຍ, ອຶ້ນນ້ອຍ, ນາບອນ ແລະ ໂຮງຮຽນມັດທະຍົມສຶກສາສົມບູນພໍ່ເຂັມ.

#### 2.1.3 ໄລຍະເວລາຄົ້ນຄວ້າ

ໄລຍະເວລາໃນການຄົ້ນຄວ້າວິໄຈຄັ້ງນີ້ ແມ່ນເລີ່ມແຕ່ ເດືອນ ພຶດສະພາ 2022 ຫາ ເດືອນ ສິງຫາ 2023.

### 2.2 ປະຊາກອນ ແລະ ການກຳນົດກຸ່ມຕົວຢ່າງ

#### 2.2.1 ປະຊາກອນ

ກຸ່ມປະຊາກອນທີ່ໃຊ້ໃນການສຶກສາຄັ້ງນີ້ ໄດ້ແກ່: ບຸກຄະລາກອນທາງການສຶກສາພາຍໃນໂຮງຮຽນມັດທະຍົມສຶກກສາສົມບູນ 08 ແຫ່ງ ໃນເມືອງເລົ່າງາມ ແຂວງສາລະວັນ. ເຊິ່ງປະກອບດ້ວຍຜູ້ບໍລິຫານຈຳນວນທັງໝົດ 24 ຄົນ ແລະ ຄູສອນຈຳນວນ 145 ຄົນ ລວມທັງໝົດ 169 ຄົນ ທີ່ສັງກັດຢູ່ໂຮງຮຽນມັດທະຍົມສຶກສາສົມບູນ ໃນເມືອງເລົ່າງາມ ແຂວງສາລະວັນ ໃນສົກຮຽນ 2021-2022 .

#### 2.2.2 ກຸ່ມຕົວຢ່າງ

ກຸ່ມຕົວຢ່າງໄດ້ແກ່ຜູ້ບໍລິຫານ ແລະ ຄູ-ອາຈານໃນໂຮງຮຽນມັດທະຍົມສຶກສາສົມບູນ ເມືອງເລົ່າງາມ ຜູ້ບໍລິຫານຈຳນວນ 24 ຄົນ, ຄູສອນ 145 ຄົນ ລວມທັງໝົດ 169 ຄົນ ດັ່ງສະແດງຕາຕະລາງ ລຸ່ມນີ້:

**ຕາຕະລາງ 3. 1** ກຸ່ມປະຊາກອນໂຮງຮຽນມັດທະຍົມສຶກສາສົມບູນໃນເມືອງເລົ່າງາມ

| ລ/ດ | ຊື່ໂຮງຮຽນ | ກຸ່ມເປົ້າໝາຍ | | |
|---|---|---|---|---|
| | | ຜູ້ບໍລິຫານ | ຄູສອນ | ລວມ |
| 01 | ມສ ເລົ່າງາມ | 3 | 48 | 51 |
| 02 | ມສ ດົງໃຫຍ່ | 4 | 20 | 24 |

| | | | | |
|---|---|---|---|---|
| 03 | ມສ ໜອງແກ | 3 | 14 | 17 |
| 04 | ມສ ດະເຊັຍ | 3 | 15 | 18 |
| 05 | ມສ ວັງເປືອຍ | 3 | 17 | 20 |
| 06 | ມສ ນາບອນ | 3 | 10 | 13 |
| 07 | ມສ ອິ້ນນ້ອຍ | 3 | 10 | 13 |
| 08 | ມສ ພໍ່ເຂັມ | 2 | 11 | 13 |
| | ລວມ | 24 | 145 | 169 |

## 2.3 ວິທີເກັບຂໍ້ມູນ ແລະ ເຄື່ອງມືທີ່ໃຊ້ໃນການເກັບຂໍ້ມູນ

### 2.3.1 ວິທີເກັບຂໍ້ມູນ

**ຂັ້ນຕອນທີ 1** ຜູ້ຄົ້ນຄວ້າຂໍໜັງສືສະເໜີລົງເກັບກໍາຂໍ້ມູນຈາກ ຄະນະບໍດີຄະນະສຶກສາສາດ ມະຫາວິທະຍາໄລ ຈໍາປາສັກ ສະເໜີເຖິງ ຫ້ອງການສຶກສາທິການ ແລະ ກິລາເມືອງເລົ່າງາມ ເພື່ອຂໍອະນຸຍາດລົງເກັບກໍາຂໍ້ມູນຈາກໂຮງຮຽນມັດທະຍົມສົມບູນ ພາຍໃນເມືອງເລົ່າງາມ ແຂວງສາລະວັນ ເພື່ອຂໍຄວາມຮ່ວມມືໃນການເກັບກໍາຂໍ້ມູນກັບກຸ່ມ ເປົ້າໝາຍ.

**ຂັ້ນຕອນທີ 2** ຜູ້ຄົ້ນຄວ້າຂໍໜັງສືສະເໜີຈາກຫ້ອງການສຶກສາທິການ ແລະ ກິລາເມືອງເລົ່າງາມ ເຖິງຜູ້ອໍານວຍການໂຮງຮຽນມັດທະຍົມສົມບູນ ພາຍໃນເມືອງເລົ່າງາມ ແຂວງສາລະວັນ.

**ຂັ້ນຕອນທີ 3** ຜູ້ຄົ້ນຄວ້າລົງໄປພົບພັນກຸ່ມເປົ້າໝາຍ ພ້ອມທັງນໍາແບບສອບຖາມໄປແຈກຢາຍ, ອະທິບາຍ ແລະ ແນະນໍາວິທີການຕອບແບບສອບຖາມໃຫ້ຜູ້ບໍລິຫານ ແລະ ຄູສອນ ເຂົ້າໃຈຢ່າງລະອຽດຈະແຈ້ງດ້ວຍຕົນເອງ.

**ຂັ້ນຕອນທີ 4** ຜູ້ຄົ້ນຄວ້າເກັບແບບສອບຖາມທີ່ກຸ່ມເປົ້າໝາຍຕອບແລ້ວນັ້ນຄືນດ້ວຍຕົນເອງໃຫ້ຄົບຕາມຈໍານວນ.

### 2.3.2 ເຄື່ອງມືທີ່ໃຊ້ໃນການເກັບຂໍ້ມູນ

ເຄື່ອງມືທີ່ໃຊ້ໃນການລວບລວມຂໍ້ມູນເປັນແບບສອບຖາມ ( Questionaire ) ກ່ຽວກັບການບໍລິຫານວຽກງານວິຊາການ 5 ດ້ານຂອງໂຮງຮຽນມັດທະຍົມສົມບູນ ພາຍໃນເມືອງເລົ່າງາມ ແຂວງສາລະວັນ ເຊິ່ງແບ່ງອອກເປັນ 3 ຕອນດັ່ງນີ້:

**ຕອນທີ 1** ເປັນການສອບຖາມຂໍ້ມູນທົ່ວໄປກ່ຽວກັບສະຖານະພາບຂອງຜູ້ຕອບແບບສອບຖາມ ເຊິ່ງເປັນແບບກວດສອບລາຍການ ( Check list ) ປະກອບດ້ວຍເພດ, ໜ້າທີ່, ວຸດທິການສຶກສາ ແລະ ປະສົບການເຮັດວຽກ.

**ຕອນທີ 2** ເປັນການສອບຖາມກ່ຽວກັບຄວາມຄິດເຫັນຂອງບຸກຄະລາກອນການສຶກສາ ຕໍ່ກັບການບໍລິຫານວຽກງານວິຊາການ 5 ດ້ານ ຂອງໂຮງຮຽນມັດທະຍົມສົມບູນ ພາຍໃນເມືອງເລົ່າງາມ ແຂວງສາລະວັນ. ມີລັກສະນະແບບມາດຕາສ່ວນປະມານຄ່າ ( Rating scale ) 5 ລະດັບ ເຊິ່ງແຕ່ລະລະດັບມີຄວາມໝາຍດັ່ງຕໍ່ໄປນີ້:

5 ໝາຍເຖິງ ປະຕິບັດຢູ່ໃນລະດັບ ຫຼາຍທີ່ສຸດ

4 ໝາຍເຖິງ ປະຕິບັດຢູ່ໃນລະດັບ ຫຼາຍ

3 ໝາຍເຖິງ ປະຕິບັດຢູ່ໃນລະດັບ ປານກາງ

2 ໝາຍເຖິງ ປະຕິບັດຢູ່ໃນລະດັບ ໜ້ອຍ

1 ໝາຍເຖິງ ປະຕິບັດຢູ່ໃນລະດັບ ໜ້ອຍທີ່ສຸດ

**ຕອນທີ 3** ເປັນແບບສອບຖາມກ່ຽວກັບຂໍ້ສະເໜີແນະແນວທາງເພີ່ມເຕີມໃນການປັບປຸງການບໍລິຫານວຽກງານວິຊາການຂອງໂຮງຮຽນມັດທະຍົມສົມບູນ ລັກສະນະສອບຖາມເປັນແບບປາຍເປີດທີ່ຖາມກ່ຽວກັບການບໍລິຫານວຽກງານວິຊາການໃນ 5 ດ້ານຄື: ດ້ານຫຼັກສູດ, ດ້ານການຈັດການຮຽນ-ການສອນ , ດ້ານສື່ການຮຽນ-ການສອນ, ດ້ານການວັດ ແລະ ປະເມີນຜົນ ແລະ ດ້ານການນິເທດພາຍໃນ.

### 2.3.3 ການສ້າງ ແລະ ການຫາຄຸນນະພາບຂອງເຄື່ອງມື

ການສ້າງເຄື່ອງມືໃນການລວບລວມຂໍ້ມູນຜູ້ຄົ້ນຄວ້າຈະດຳເນີນຕາມຂັ້ນຕອນດັ່ງຕໍ່ໄປນີ້:

1. ສຶກສາຄົ້ນຄວ້າແນວຄິດ, ຫຼັກການ, ທິດສະດີ, ວິທະຍານິພົນ ແລະ ບົດຄົ້ນຄວ້າທີ່ກ່ຽວຂ້ອງກັບການບໍລິຫານວຽກງານວິຊາການ ເພື່ອເປັນບ່ອນອີງໃນການສ້າງເຄື່ອງມື.

2. ການສ້າງແບບສອບຖາມໄປຕາມຈຸດປະສົງກອບແນວຄິດ ແລະ ນິຍາມສັບທີ່ຕັ້ງໄວ້ ເພື່ອເປັນເຄື່ອງມືໃນການລວບລວມຂໍ້ມູນ.

3. ນຳແບບສອບຖາມສະເໜີຕໍ່ອາຈານທີ່ປຶກສາ ເພື່ອກວດສອບທາງດ້ານເນື້ອໃນ ແລະ ໂຄງສ້າງຂອງແບບສອບຖາມ.

4. ນຳແບບສອບຖາມມາປັບປຸງແກ້ໄຂຕາມຄຳແນະນຳຂອງອາຈານທີ່ປຶກສາ.

5. ນຳແບບສອບຖາມສະເໜີຜູ້ຊ່ຽວຊານ 3 ທ່ານ ເພື່ອນຳມາພິຈາລະນາກວດສອບດ້ານຄວາມທ່ຽງຕົງ ຫຼື ຄວາມຖືກຕ້ອງດ້ານເນື້ອໃນ, ຈາກນັ້ນນຳມາຫາຄ່າຄວາມສອດຄ່ອງ IOC ເລືອກຂໍ້ຄຳຖາມທີ່ມີຄ່າຄວາມສອດຄ່ອງຕັ້ງແຕ່ 0.5 ຂຶ້ນໄປມາເປັນແບບສອບຖາມມາດຕາສ່ວນປະມານ 5 ລະດັບ.

6. ນຳແບບສອບຖາມໄປທົດລອງໃຊ້ກັບຜູ້ບໍລິຫານ ແລະ ຄູອາຈານໂຮງຮຽນມັດທະຍົມສົມບູນເຊເສັດ ເມືອງສາລະວັນ ທີ່ບໍ່ແມ່ນກຸ່ມເປົ້າໝາຍຈຳນວນ 30 ຄົນ.

7. ນຳຂໍ້ມູນທີ່ໄດ້ຈາກການທົດລອງມາຫາຄ່າຄວາມເຊື່ອໝັ້ນຂອງແບບສອບຖາມ ໂດຍການຫາຄ່າສຳປະສິດຕາມວິທີຂອງ Cronbach (ພັດທະລາພອນ ເກດສັງ, 2549:138) ໄດ້ຄ່າຄວາມເຊື່ອໝັ້ນເທົ່າກັບ 0.94.

### 2.4 ການວິເຄາະຂໍ້ມູນ ແລະ ແປຜົນ

**ຂັ້ນຕອນທີ 1** ເປັນການວິເຄາະຂໍ້ມູນກ່ຽວກັບສະຖານະພາບຂອງຜູ້ຕອບແບບສອບຖາມ ໂດຍຫາຄ່າຄວາມຖີ່ (Frequency) ແລະ ຄ່າສ່ວນຮ້ອຍ (Percentage).

**ຂັ້ນຕອນທີ 2** ເປັນການວິເຄາະຂໍ້ມູນກ່ຽວກັບຄວາມຄິດເຫັນຂອງຜູ້ບໍລິຫານ ແລະ ຄູອາຈານສອນ ຕໍ່ກັບການບໍລິຫານວຽກງານວິຊາຂອງໂຮງຮຽນມັດທະຍົມສົມບູນພາຍໃນເມືອງເລົ່າງາມ ແຂວງສາລະວັນ ໃນ 5 ດ້ານ ໂດຍການຫາຄ່າສະເລ່ຍ ($\mu$) ແລະ ຄ່າຜັນປ່ຽນມາດຖານ($\sigma$) ແລ້ວປຽບທຽບກັບເກນການແປຜົນຕາມວິທີຂອງຈັນທະວີ ສີສະຫວາດ (2017:49) ດັ່ງຕໍ່ໄປນີ້:

ຄ່າສະເລ່ຍ 4.51 – 5.00 ໝາຍເຖິງການປະຕິບັດ ໃນລະດັບຫຼາຍທີ່ສຸດ

ຄ່າສະເລ່ຍ 3.51 – 4.50 ໝາຍເຖິງການປະຕິບັດ ໃນລະດັບຫຼາຍ

ຄ່າສະເລ່ຍ 2.51 – 3.50 ໝາຍເຖິງການປະຕິບັດ ໃນລະດັບປານກາງ

ຄ່າສະເລ່ຍ 1.51 – 2.50 ໝາຍເຖິງການປະຕິບັດ ໃນລະດັບໜ້ອຍ

ຄ່າສະເລ່ຍ 1.00 – 1.50 ໝາຍເຖິງການປະຕິບັດ ໃນລະດັບໜ້ອຍທີ່ສຸດ

**ຂັ້ນຕອນທີ 3** ປຽບທຽບຄວາມຄິດເຫັນຂອງຜູ້ບໍລິຫານ ແລະ ຄູສອນ ຕໍ່ກັບບໍລິຫານວຽກງານວິຊາການຂອງໂຮງຮຽນມັດທະຍົມສົມບູນ ພາຍໃນເມືອງເລົ່າງາມ ແຂວງສາລະວັນ ຈຳແນກຕາມເພດ, ໜ້າທີ່, ວຸດທິການສຶກສາ ແລະ ປະສົບການເຮັດວຽກ ໂດຍການທົດສອບຄວາມແຕກຕ່າງລະຫວ່າງຄ່າສະເລ່ຍ ດ້ວຍສະຖິຕິທົດສອບ T-test ແລະ F-test ຖ້າພົບເຫັນວ່າມີຄວາມແຕກຕ່າງກັນຢ່າງມີຄວາມສຳຄັນທາງສະຖິຕິທີ່ລະດັບ 0.05 ຈຶ່ງເຮັດການທົດສອບເປັນແຕ່ລະຄູ່ ດ້ວຍວິທີ ຂອງ Scheffe ແລະ (LSD).

**ຂັ້ນຕອນທີ 4** ເປັນການວິເຄາະຂໍ້ມູນກ່ຽວກັບຂໍ້ສະເໜີແນະແນວທາງ, ເພື່ອເປັນການປັບປຸງການບໍລິຫານວຽກງານວິຊາການຂອງໂຮງຮຽນມັດທະຍົມສົມບູນ ພາຍ

ໃນເມືອງເລົ່າງາມ ແຂວງສາລະວັນ ນຳມາວິເຄາະເນື້ອໃນ ໂດຍການຈັດກຸ່ມຂໍ້ມູນ, ຕີຄວາມໝາຍແລ້ວນຳມາຂຽນ ລຽງຄວາມແບບພັນລະນາ.

**2.5 ສະຖິຕິທີ່ໃຊ້ໃນການຄົ້ນຄວ້າ**

**ໄດ້ແກ່: ສະຖິຕິພື້ນຖານ** 1. ຫາຄ່າຄວາມຖີ່ (Frequency), 2. ຄ່າສ່ວນຮ້ອຍ (Percentage) 3. ການຫາຄ່າສະເລ່ຍ ($\mu$) ແລະ 4. ຄ່າຜັນປ່ຽນມາດຖານ ($\sigma$) **ສະຖິຕິທົດສອບສົມມຸດຖານ** 1. ສະຖິຕິປຽບທຽບ ( T-test ) ແມ່ນໃຊ້ສົມມຸດຕິຖານກ່ຽວກັບ ເພດ, ໜ້າທີ່ ແລະ ວຸດທິການສຶກສາ ທີ່ມີຕົວປ່ຽນຕົ້ນ 2 ລະດັບ, 2. ສະຖິຕິທົດສອບ ( F-test ) ແມ່ນໃຊ້ກັບສົມມຸດຕິຖານ ກ່ຽວກັບ ປະສົບການໃນການສອນ ທີ່ມີຕົວປ່ຽນ 3 ລະດັບ ຫຼື ສະຖິຕິວິເຄາະຄວາມຜັນປ່ຽນທາງດຽວ ( Oneway ANoVA ).

**3. ຜົນໄດ້ຮັບ**

1 ໄດ້ຮູ້ສະພາບການບໍລິຫານວຽກງານວິຊາການ ຂອງ ໂຮງຮຽນມັດທະຍົມສົມບູນ ພາຍໃນເມືອງເລົ່າງາມ ແຂວງສາລະວັນ, 2. ໄດ້ຮູ້ແນວທາງໃນການບໍລິຫານວຽກງານວິຊາການ ຂອງໂຮງຮຽນມັດທະຍົມສົມບູນ ພາຍໃນເມືອງເລົ່າງາມ ແຂວງສາລະວັນ ຈຳແນກຕາມເພດ, ໜ້າທີ່ , ວຸດທິການສຶກສາ ແລະ ປະສົບການໃນການເຮັດວຽກ, 3. ໄດ້ຂໍ້ມູນທີ່ເປັນແນວທາງໃຫ້ແກ່ຜູ້ບໍລິຫານໂຮງຮຽນມັດທະຍົມສົມບູນ ພາຍໃນເມືອງເລົ່າງາມ ແຂວງສາລະວັນ ນຳໄປໃຊ້ໃນການປັບປຸງ ແລະ ບໍລິຫານວຽກງານວິຊາໃນໂຮງຮຽນ.

**4. ວິພາກຜົນການສຶກສາ**

1. ສະພາບການບໍລິຫານວຽກງານວິຊາການ ຂອງ ໂຮງຮຽນມັດທະຍົມສົມບູນ ພາຍໃນເມືອງເລົ່າງາມ ແຂວງສາລະວັນ

**1) ດ້ານຫຼັກສູດ** ໂດຍລວມຢູ່ໃນລະດັບຫຼາຍ ເມື່ອພິຈາລະນາເປັນແຕ່ລະດ້ານເຫັນວ່າທຸກດ້ານຢູ່ໃນລະດັບຫຼາຍ ເນື່ອງຈາກວ່າ ຜູ້ບໍລິຫານ ແລະ ຄູສອນ ໄດ້ດຳເນີນການຮຽນ-ການສອນຕາມຈຸດປະສົງຂອງຫຼັກສູດທີ່ກະຊວງສຶກສາທິການ ແລະ ກິລາ ກຳນົດໄວ້, ມີການຕິດຕາມ ແລະ ປະເມີນຜົນການປະຕິບັດຫຼັກສູດ, ໄດ້ຕິດຕາມເບິ່ງແຍງໃຫ້ຄູປະຕິບັດຫຼັກສູດຕາມຈຸດມຸ້ງໝາຍຂອງຫຼັກສູດທີ່ກຳນົດໄວ້, ໄດ້ຈັດການຮຽນ - ການສອນເປັນໄປຕາມໂຄງສ້າງຂອງຫຼັກສູດ ແລະ ໄດ້ສ້າງຄວາມຮູ້, ຄວາມເຂົ້າໃຈກ່ຽວກັບການນຳໃຊ້ຫຼັກສູດໃຫ້ແກ່ຄູຢ່າງຕໍ່ເນື່ອງ ເຊິ່ງສອດຄ່ອງກັບບົດຄົ້ນຄວ້າຂອງ ພຣະສູນທອນ ວົງກະເສດ (2020) ໄດ້ສຶກສາສະພາບການບໍລິຫານວຽກງານວິຊາການໃນ ໂຮງຮຽນມັດທະຍົມຕອນຕົ້ນສົງ ໃນນະຄອນຫຼວງວຽງຈັນ ເຊິ່ງຜົນການສຶກສາພົບວ່າ ໂດຍລວມແມ່ນຢູ່ໃນລະດັບຫຼາຍ.

**2) ດ້ານການຮຽນ-ການສອນ** ໂດຍລວມຢູ່ໃນລະດັບຫຼາຍ ເມື່ອພິຈາລະນາເປັນແຕ່ລະດ້ານເຫັນວ່າທຸກດ້ານຢູ່ໃນລະດັບຫຼາຍ ເນື່ອງຈາກວ່າ ຜູ້ບໍລິຫານ ແລະ ຄູສອນ ໄດ້ມີການຈັດຕາຕະລາງການຮຽນ - ການສອນສອດຄ່ອງຕາມໂຄງສ້າງຂອງຫຼັກສູດ, ໄດ້ຕິດຕາມ ແລະ ຊຸກຍູ້ໃຫ້ຄູສ້າງແຜນການສອນ ແລະ ແຕ່ງບົດສອນ, ໄດ້ຕິດຕາມການຈັດການຮຽນ - ການສອນ ເຊິ່ງສອດຄ່ອງກັບບົດຄົ້ນຄວ້າຂອງ ເພັດ ວິໄລພົນ (2015) ໄດ້ຄົ້ນຄວ້າກ່ຽວກັບການບໍລິຫານວຽກງານວິຊາການໂຮງຮຽນມັດທະຍົມສຶກສາ ໃນເມືອງຊະນະຄາມ ແຂວງວຽງຈັນ ຜົນການຄົ້ນຄວ້າພົບວ່າດ້ານການຈັດການຮຽນ -ການສອນ ໂດຍລວມຢູ່ໃນລະດັບຫາຍ.

**3) ດ້ານສື່ການຮຽນ-ການສອນ** ໂດຍລວມຢູ່ໃນລະດັບຫຼາຍ ເມື່ອພິຈາລະນາເປັນແຕ່ລະດ້ານເຫັນວ່າທຸກດ້ານຢູ່ໃນລະດັບຫຼາຍເມື່ອພິຈາລະນາເປັນແຕ່ລະດ້ານເຫັນວ່າທຸກດ້ານຢູ່ໃນລະດັບຫຼາຍ ເນື່ອງຈາກວ່າ ຜູ້ບໍລິຫານ ແລະ ຄູສອນ ໄດ້ມີການຕິດຕາມ, ກວດກາ ແລະ ຄຸ້ມຄອງອຸປະກອນສື່ການຮຽນ-ການສອນໃນແຕ່ລະຊັ້ນ

ຮຽນ, ໄດ້ມີການນຳໃຊ້ສື່ການຮຽນ-ການສອນເໝາະສົມກັບແຕ່ລະວິຊາ, ໄດ້ມີການສົ່ງເສີມຄູໃຫ້ຜະລິດສື່ການຮຽນ-ການສອນດ້ວຍວັດຖຸທີ່ມີຢູ່ທ້ອງຖິ່ນ ແລະ ໄດ້ສົ່ງເສີມໃຫ້ຄູໄດ້ນຳໃຊ້ອຸປະກອນໃໝ່ໆ ເຂົ້າໃນການຈັດການຮຽນ-ການສອນຢ່າງເປັນປົກກະຕິ ເຊິ່ງສອດຄ່ອງກັບບົດຄົ້ນຄວ້າ ຂອງຄຳພູໄທ ນວນລະວົງ (2014) ການບໍລິຫານວຽກງານວິຊາການ ໃນວິທະຍາໄລເຕັກນິກແຂວງວຽງຈັນ ຜົນການຄົ້ນຄວ້າພົບວ່າ ດ້ານສື່ການຮຽນ-ການສອນ ໂດຍລວມຢູ່ໃນລະດັບຫຼາຍ.

**4) ດ້ານວັດ ແລະ ປະເມີນຜົນ** ໂດຍລວມຢູ່ໃນລະດັບຫຼາຍ ເມື່ອພິຈາລະນາເປັນແຕ່ລະດ້ານເຫັນວ່າທຸກດ້ານຢູ່ໃນລະດັບຫຼາຍ ເນື່ອງຈາກວ່າ ຜູ້ບໍລິຫານ ແລະ ຄູສອນ ໄດ້ມີການປະຊຸມຕັດສິນຜົນການຮຽນຂອງນັກຮຽນແຕ່ລະສົກຮຽນຢ່າງເປັນປົກກະຕິ, ມີການວັດ ແລະ ປະເມີນໂດຍນຳໃຊ້ຮູບແບບປາລະໄນ, ອັດຕະໄນ ແລະ ຮູບແບບອື່ນໆ ຢ່າງເໝາະສົມ ເຊິ່ງສອດຄ່ອງກັບບົດຄົ້ນຄວ້າ ຂອງບຸນຄົງ ພົມມະວົງ (2015) ການບໍລິຫານວິຊາການຂອງວິທະຍາໄລສົງ ໃນ ສ ປ ປ ລາວ ຜົນການຄົ້ວຄວ້າພົບວ່າ ດ້ານການວັດ ແລະ ປະເມີນຜົນ ໂດຍລວມຢູ່ໃນລະດັບຫຼາຍ.

**5) ດ້ານການນິເທດພາຍໃນ** ໂດຍລວມຢູ່ໃນລະດັບຫຼາຍ ເມື່ອພິຈາລະນາເປັນແຕ່ລະດ້ານເຫັນວ່າທຸກດ້ານຢູ່ໃນລະດັບຫຼາຍ ເນື່ອງຈາກວ່າ ຜູ້ບໍລິຫານ ແລະ ຄູສອນໄດ້ມີການວາງແຜນນິເທດພາຍໃນໂຮງຮຽນຢ່າງເປັນປົກກະຕິ, ມີການບັນທຶກຂໍ້ມູນ ແລະ ຖອດຖອນບົດຮຽນໃນການນິເທດທຸກຄັ້ງ ແລະ ມີການປະເມີນຜົນການນິເທດການຮຽນ-ການສອນຢູ່ສະເໝີ ເຊິ່ງສອດຄ່ອງກັບມະນີຈັນ ພົງສະຫວັດມີໄຊ (2014). ການບໍລິຫານວິຊາການຂອງໂຮງຮຽນມັດທະຍົມສຶກສາ ໃນເມືອງນາຊາຍທອງ ນະຄອນຫຼວງວຽງຈັນ ຜົນການຄົ້ວຄວ້າພົບວ່າ ດ້ານສື່ການຮຽນ-ການສອນ ໂດຍລວມຢູ່ໃນລະດັບຫຼາຍ.

**2. ປຽບທຽບຄວາມຄິດເຫັນຂອງຜູ້ບໍລິຫານ ແລະ ຄູສອນ ກ່ຽວກັບການບໍລິຫານວຽກງານວິຊາການ ຂອງໂຮງຮຽນມັດທະຍົມສົມບູນ ພາຍໃນເມືອງເລົ່າງາມ ແຂວງສາລະວັນ ໂດຍຈຳແນກຕາມເພດ, ໜ້າທີ່, ວຸດທິການສຶກສາ ແລະ ປະສົບການເຮັດວຽກ**

1) ຈາກການປຽບທຽບຄວາມຄິດເຫັນຂອງຜູ້ບໍລິຫານ ແລະ ຄູສອນໃນ 5 ດ້ານຈຳແນກຕາມເພດ ໂດຍລວມ ແລະ ແຕ່ລະດ້ານແມ່ນບໍ່ແຕກຕ່າງກັນຢ່າງມີຄວາມສຳຄັນທາງສະຖິຕິທີລະດັບ 0.05 ເນື່ອງຈາກວ່າ ຜູ້ບໍລິຫານ ແລະ ຄູສອນ ທີ່ເປັນເພດຊາຍ ແລະ ເພດຍິງ ຕ່າງກໍເຫັນຄວາມສຳຄວາມສຳຄັນການບໍລິຫານວຽກງານວິຊາການ ເພາະວ່າວຽກງານວິຊາການເປັນຫົວໃຈຂອງໂຮງຮຽນ ການບໍລິຫານຂອງໂຮງຮຽນທຸກຢ່າງ ເພື່ອຕອບສະໜອງຄວາມສຳເລັດຂອງຜົນງານວິຊາການ ຫຼື ການຮຽນ - ການສອນ ຈຸດມຸ້ງໝາຍຂອງວຽກງານວິຊາການຢູ່ທີ່ການສ້າງນັກຮຽນໃຫ້ມີຄຸນນະພາບ ເຊິ່ງສອດຄ່ອງກັບ ເພັດ ວິໄລພົນ (2015) ໄດ້ຄົ້ນຄວ້າກ່ຽວກັບການບໍລິຫານວຽກງານວິຊາການຂອງໂຮງຮຽນມັດທະຍົມສຶກສາ ໃນເມືອງຊະນະຄາມ ແຂວງວຽງຈັນ ຜົນການຄົ້ນຄວ້າພົບວ່າຜູ້ບໍລິຫານ ແລະ ຄູສອນ ມີຄວາມຄິດເຫັນກ່ຽວກັບສະພາບການບໍລິຫານວຽກງານວິຊາການຂອງໂຮງຮຽນມັດທະຍົມສຶກສາ ໃນເມືອງຊະນະຄາມ ແຂວງວຽງຈັນ ໂດຍພາບລວມ ແລະ ແຕ່ລະດ້ານ ແມ່ນແຕກຕ່າງກັນຢ່າງມີຄວາມສຳຄັນທາງສະຖິຕິທີ່ລະດັບ 0.05.

2) ຈາກການປຽບທຽບຄວາມຄິດເຫັນຂອງຜູ້ບໍລິຫານ ແລະ ຄູສອນ ໃນ 5 ດ້ານ ພົບວ່າ: ໂດຍລວມ ແລະ ແຕ່ລະດ້ານ ແມ່ນບໍ່ແຕກຕ່າງກັນຢ່າງມີຄວາມສຳຄັນທາງສະຖິຕິທີ່ລະດັບ 0.05 ເນື່ອງຈາກວ່າ ຜູ້ບໍລິຫານ ແລະ ຄູສອນ ທີ່ມີໜ້າທີ່ຕ່າງກັນ ແຕ່ກໍໄດ້ເອົາໃຈໃສ່ ແລະ ໃຫ້ຄວາມສຳຄັນກັບການບໍລິຫານການວຽກງານວິຊາການ ເຊັ່ນດຽວກັນ ເປັນຕົ້ນ: ແມ່ນການປະຕິບັດຫຼັກສູດ, ການຈັດການຮຽນ-ການສອນ, ດ້ານອຸປະກອນການຮຽນ-ການ

ສອນ ຫຼື ສື່ການຮຽນ-ການສອນ, ການວັດປະເມີນຜົນ ແລະ ດ້ານການນິເທດພາຍໃນ ແມ່ນໄດ້ປະຕິບັດໄປຕາມການຊີ້ນໍາຂອງຫ້ອງການສຶກສາທິການ ແລະ ກິລາເມືອງ ແລະ ພະແນກສຶກສາທິການ ແລະ ກິລາແຂວງ ກໍຄືກະຊວງສຶກສາທິການ ແລະ ກິລາໄດ້ວາງອອກແຕ່ໄລຍະ ເຊິ່ງສອດຄ່ອງກັບ ຄໍາຫຼ້າ ອຸດົມສິນ (2010) ໄດ້ຄົ້ນຄວ້າກ່ຽວກັບສະພາບ ແລະ ບັນຫາການບໍລິຫານງານວິຊາການຂອງໂຮງຮຽນມັດທະຍົມສົມບູນ ໃນເຂດນະຄອນຫຼວງວຽງຈັນ ຜົນການຄົ້ນຄວ້າພົບວ່າຜູ້ບໍລິຫານ ແລະ ຄູສອນມີຄວາມຄິດເຫັນກ່ຽວສະພາບ ແລະ ບັນຫາການບໍລິຫານງານວິຊາການຂອງໂຮງຮຽນມັດທະຍົມສົມບູນ ໃນເຂດນະຄອນຫຼວງວຽງຈັນ ໂດຍພາບລວມ ແລະ ແຕ່ລະດ້ານແມ່ນບໍ່ແຕກຕ່າງກັນຢ່າງມີຄວາມສໍາຄັນທາງສະຖິຕິທີ່ລະດັບ 0.05.

3) ຈາກການປຽບທຽບຄວາມຄິດເຫັນຂອງຜູ້ບໍລິຫານ ແລະ ຄູສອນ ໃນ 5 ດ້ານພົບວ່າ: ຄວາມຄິດເຫັນຂອງຜູ້ບໍລິຫານ ແລະ ຄູສອນ ກ່ຽວກັບການບໍລິຫານວຽກງານວິຊາການ ຂອງໂຮງຮຽນມັດທະຍົມສົມບູນ ພາຍໃນເມືອງເລົ່າງາມ ແຂວງສາລະວັນ ໂດຍລວມເຫັນວ່າ ຜູ້ບໍລິຫານ ແລະ ຄູສອນ ທີ່ມີວຸດທິການສຶກສາແຕກຕ່າງກັນ ມີຄວາມຄິດເຫັນກ່ຽວກັບການບໍລິຫານວຽກງານວິຊາການຂອງໂຮງຮຽນມັດທະຍົມສົມບູນ ພາຍໃນເມືອງເລົ່າງາມ ແຂວງສາລະວັນ ແຕກຕ່າງກັນ ຢ່າງມີຄວາມສໍາຄັນທາງສະຖິຕິທີ່ລະດັບ 0.05 ເນື່ອງຈາກວ່າ ຜູ້ບໍລິຫານ ແລະ ຄູສອນ ທີ່ມີວຸດທິການສຶກສາທັງສອງລະດັບແມ່ນມີຄວາມຮູ້ ແລະ ຄວາມເຂົ້າໃຈກ່ຽວກັບການປະຕິບັດຫຼັກສູດ, ການຈັດການຮຽ-ການສອນ, ສື່ການຮຽນ-ການສອນ, ການວັດ ແລະ ປະເມີນຜົນແຕກຕ່າງກັນ ຜູ້ທີ່ມີການສຶກສາສູງ ແລະ ປະສົບການສູງ ຈະເຂົ້າກ່ຽວວຽກງານບໍລິຫານວິຊາການໄດ້ດີ ສ່ວນຄູທີ່ຈົບຊັ້ນສູງ ໃນເມືອງເລົ່າງາມລ້ວນແຕ່ເປັນຄູເກົ່າ ຄວາມອາດສາມາດໃນການນໍາໃຊ້ເຄື່ອງ ICT ກໍຕໍ່າ ເຊິ່ງສອດຄ່ອງກັບ ປິຍະພັນ ສິລິຣັກ (2562) ການບໍລິຫານງານວິຊາການໃນສະຖານສຶກສາຂັ້ນພື້ນຖານສູ່ຄວາມເປັນເລີດ. ສັງກັດສໍານັກງານເຂດພື້ນທີ່ການສຶກສາມັດທະຍົມສຶກສາເຂດ 45 ໂດຍພາບລວມແມ່ນແຕກຕ່າງກັນຢ່າງມີຄວາມສໍາຄັນທາງສະຖິຕິທີ່ລະດັບ 0.05.

4) ຈາກການປຽບທຽບຄວາມຄິດເຫັນຂອງຜູ້ບໍລິຫານ ແລະ ຄູສອນໃນ 5 ດ້ານພົບວ່າ: ໂດຍລວມ ແລະ ແຕ່ລະດ້ານແມ່ນແຕກຕ່າງກັນ ຢ່າງມີຄວາມສໍາຄັນທາງສະຖິຕິທີ່ລະດັບ 0.05. ເນື່ອງຈາກວ່າ ຜູ້ບໍລິຫານ ແລະ ຄູສອນ ທີ່ມີປະສົບການໃນການເຮັດວຽກ 12 ປີຂຶ້ນໄປ ມີຄວາມຄິດເຫັນກ່ຽວກັບການບໍລິຫານວຽກງານວິຊາການຫຼາຍກວ່າຜູ້ບໍລິຫານ ແລະ ຄູສອນ ທີ່ມີປະສົບການໃນການເຮັດວຽກ 6-11 ປີ ແລະ ຕໍ່າກວ່າ 5 ປີ ທັງນີ້ກໍຍ້ອນວ່າ ຜູ້ບໍລິຫານ ແລະ ຄູສອນ ທີ່ມີວຸດທິການສຶກສາ ແລະ ປະສົບການເຮັດວຽກສູງ ແມ່ນມີຄວາມເຂົ້າໃຈຕໍ່ການວາງແຜນວຽກງານໄດ້ດີ, ມີປະສົບການຢ່າງຍາວນານກ່ຽວກັບງານງານວິຊາການ ເຮັດໃຫ້ການບໍລິຫານມີຄວາມສະດວກ , ວອງໄວ ສາມາດແກ້ໄຂບັນຫາສະເພາະໜ້າໄດ້ ເຊິ່ງສອດຄ່ອງກັບ ພິມໃຈ ພຸດຈະຕຸລັດ (2562) ການບໍລິຫານວິຊາການຂອງໂຮງຮຽນ ສັງກັດສໍານັກງານການສຶກສາທິການ ພາກ 1 ຈັງຫວັດປະທຸມທານີ ໂດຍພາບລວມ ແລະ ແຕ່ລະດ້ານ ແມ່ນແຕກຕ່າງກັນຢ່າງມີຄວາມສໍາຄັນທາງສະຖິຕິທີ່ລະດັບ 0.05.

**5. ສະຫຼຸບຜົນການສຶກສາ**

**5.1.1 ສະພາບການບໍລິຫານວຽກງານວິຊາການ ຂອງໂຮງຮຽນມັດທະຍົມສົມບູນ ພາຍໃນເມືອງເລົ່າງາມ ແຂວງສາລະວັນ**

**ດ້ານຫຼັກສູດ** ເຫັນວ່າໂດຍລວມຢູ່ໃນລະດັບຫຼາຍ ເມື່ອພິຈາລະນາເປັນແຕ່ລະດ້ານເຫັນວ່າທຸກດ້ານຢູ່ໃນລະດັບຫຼາຍທັງໝົດ ເມື່ອລຽງລໍາດັບຄ່າສະເລ່ຍແຕ່ຫຼາຍຫາໜ້ອຍພົບວ່າ ດ້ານທີ່ມີຄ່າສະເລ່ຍສູງສຸດແມ່ນ

ໂຮງຮຽນໄດ້ດຳເນີນ ການຮຽນ-ການສອນຕາມຈຸດປະສົງຂອງຫຼັກສູດທີ່ກຳນົດໄວ້, ຮອງລົງມາແມ່ນຂໍ້ໂຮງຮຽນໄດ້ຈັດການຮຽນ-ການສອນເປັນໄປຕາມໂຄງສ້າງຂອງຫຼັກສູດ, ສ່ວນດ້ານທີ່ມີຄ່າລະເລ່ຍໜ້ອຍສຸດແມ່ນໂຮງຮຽນໄດ້ປະຖົມນິເທດ ເພື່ອສ້າງຄວາມຮູ້, ຄວາມເຂົ້າໃຈກັບການນຳໃຊ້ຫຼັກສູດໃຫ້ແກ່ຄູໃໝ່.

**ດ້ານການຮຽນ-ການສອນ** ໂດຍລວມຢູ່ໃນລະດັບຫຼາຍ ເມື່ອພິຈາລະນາເປັນແຕ່ລະດ້ານເຫັນວ່າທຸກດ້ານຢູ່ໃນລະດັບຫຼາຍທັງໝົດ ເມື່ອລຽງລຳດັບຄ່າສະເລ່ຍແຕ່ຫຼາຍຫາໜ້ອຍພົບວ່າ ດ້ານທີ່ມີຄ່າສະເລ່ຍຫຼາຍສຸດແມ່ນຂໍ້ທີ 1 ໂຮງຮຽນໄດ້ມີການຈັດຕາຕະລາງການຮຽນ-ການສອນ ຕາມໂຄງສ້າງຂອງຫຼັກສູດ, ຮອງລົງມາແມ່ນຂໍ້ທີ 3 ໂຮງຮຽນໄດ້ຕິດຕາມ ແລະ ຊຸກຍູ້ໃຫ້ຄູສ້າງແຜນການສອນ ແຕ່ງບົດສອນ, ສ່ວນດ້ານທີ່ມີຄ່າລະເລ່ຍໜ້ອຍສຸດແມ່ນຂໍ້ທີ 6 ໂຮງຮຽນໄດ້ຈັດຫາວັດສະດຸ, ອຸປະກອນໃຫ້ແກ່ຄູຢ່າງພຽງພໍໃນການຜະລິດສື່ການຮຽນ-ການສອນ.

**ດ້ານສື່ການຮຽນ-ການສອນ** ໂດຍລວມຢູ່ໃນລະດັບຫຼາຍ ເມື່ອພິຈາລະນາເປັນແຕ່ລະຂໍ້ພົບວ່າຢູ່ໃນລະດັບຫຼາຍທັງໝົດ ເມື່ອລຽງລຳດັບຄ່າສະເລ່ຍແຕ່ຫຼາຍຫາໜ້ອຍພົບວ່າຂໍ້ທີ່ມີຄ່າສະເລ່ຍຫຼາຍສຸດແມ່ນຂໍ້ທີ 6 ໂຮງຮຽນໄດ້ມີການຕິດຕາມກວດກາ ແລະ ຄຸ້ມຄອງວັດຖຸອຸປະກອນ ແລະ ສື່ການຮຽນ-ການສອນໃນແຕ່ລະຊັ້ນຮຽນ, ຮອງລົງມາແມ່ນຂໍ້ທີ 3 ໂຮງຮຽນໄດ້ນຳໃຊ້ສື່ການຮຽນ-ການສອນເໝາະກັບແຕ່ລະວິຊາ, ສ່ວນຂໍ້ທີ່ມີຄ່າລະເລ່ຍໜ້ອຍສຸດແມ່ນຂໍ້ທີ 1 ໂຮງຮຽນໄດ້ມີການຈັດກອງປະຊຸມ ເພື່ອໃຫ້ຄູມີຄວາມຮູ້ກ່ຽວກັບການນຳໃຊ້ ແລະ ຜະລິດສື່ການຮຽນ-ການສອນ.

**ດ້ານວັດ ແລະ ປະເມີນຜົນ** ໂດຍລວມຢູ່ໃນລະດັບຫຼາຍ ເມື່ອພິຈາລະນາເປັນແຕ່ລະດ້ານເຫັນວ່າທຸກດ້ານຢູ່ໃນລະດັບຫຼາຍທັງໝົດ ເມື່ອລຽງລຳດັບຄ່າສະເລ່ຍແຕ່ຫຼາຍຫາໜ້ອຍພົບວ່າ ດ້ານທີ່ມີຄ່າສະເລ່ຍຫຼາຍສຸດແມ່ນຂໍ້ທີ 1 ໂຮງຮຽນໄດ້ມີການປະຊຸມມຕັດສິນຜົນການຮຽນຂອງນັກຮຽນແຕ່ລະສົກຮຽນ, ຮອງລົງມາແມ່ນຂໍ້ທີ 6 ໂຮງຮຽນໄດ້ໃຫ້ຄູ ວັດ ແລະ ປະເມີນຜົນ ໂດຍໃຊ້ແບບທົດສອບແບບປາລະໄນ, ອັດຕະໄນ ແລະ ອື່ນໆ, ສ່ວນດ້ານທີ່ມີຄ່າລະເລ່ຍໜ້ອຍສຸດແມ່ນຂໍ້ທີ 7 ໂຮງຮຽນໄດ້ມີການລາຍງານຜົນການຮຽນໃຫ້ຜູ້ປົກຄອງນັກຮຽນ ແລະ ການຈັດຕັ້ງທີ່ກ່ຽວຂ້ອງ.

**ດ້ານການນິເທດພາຍໃນ** ໂດຍລວມຢູ່ໃນລະດັບຫຼາຍ ເມື່ອພິຈາລະນາເປັນແຕ່ລະດ້ານເຫັນວ່າທຸກດ້ານຢູ່ໃນລະດັບຫຼາຍທັງໝົດ ເມື່ອລຽງລຳດັບຄ່າສະເລ່ຍແຕ່ຫຼາຍຫາໜ້ອຍພົບວ່າ ດ້ານທີ່ມີຄ່າສະເລ່ຍຫຼາຍສຸດແມ່ນຂໍ້ທີ 1 ໂຮງຮຽນໄດ້ມີການວາງແຜນການນິເທດພາຍໃນໂຮງຮຽນ, ຮອງລົງມາແມ່ນຂໍ້ທີ 5 ໂຮງຮຽນໄດ້ມີການດຳເນີນການນິເທດການຮຽນ-ການສອນເປັນປົກກະຕິ, ສ່ວນດ້ານທີ່ມີຄ່າລະເລ່ຍໜ້ອຍສຸດແມ່ນຂໍ້ທີ 2 ໂຮງຮຽນໄດ້ສົ່ງເສີມໃຫ້ຄູຜູ້ສອນໄດ້ມີການແລກປ່ຽນຖອດຖອນບົດຮຽນຈາກສະຖານການການສຶກສາຕ່າງໆ.

**5.1.2 ປຽບທຽບຄວາມຄິດເຫັນຂອງຜູ້ບໍລິຫານ ແລະ ຄູສອນ ກ່ຽວກັບການບໍລິຫານວຽກງານວິຊາການຂອງໂຮງຮຽນມັດທະຍົມສົມບູນ ພາຍໃນເມືອງເລົ່າງາມ ແຂວງສາລະວັນ ໂດຍຈຳແນກຕາມເພດ, ໜ້າທີ່, ວຸດທິການສຶກສາ ແລະ ປະສົບການເຮັດວຽກ ໃນ 5 ດ້ານ**

1) ປຽບທຽບຄວາມຄິດເຫັນຂອງຜູ້ບໍລິຫານ ແລະ ຄູສອນ ກ່ຽວກັບການບໍລິຫານວຽກງານວິຊາການຂອງໂຮງຮຽນມັດທະຍົມສົມບູນ ພາຍໃນເມືອງເລົ່າງາມ ແຂວງສາລະວັນໃນ5 ດ້ານ ໂດຍຈຳແນກຕາມເພດ ພົບວ່າ: ໂດຍລວມແມ່ນບໍ່ແຕກຕ່າງກັນຢ່າງມີຄວາມສຳຄັນທາງສະຖິຕິທີ່ລະດັບ 0.05.

2) ປຽບທຽບຄວາມຄິດເຫັນຂອງຜູ້ບໍລິຫານ ແລະ ຄູສອນ ກ່ຽວກັບການບໍລິຫານວຽກງານວິຊາການຂອງໂຮງຮຽນມັດທະຍົມສົມບູນ ພາຍໃນເມືອງເລົ່າງາມ ແຂວງສາລະວັນ ໃນ 5 ດ້ານ ໂດຍຈຳແນກຕາມໜ້າທີ່ ພົບ

ວ່າ: ໂດຍລວມບໍ່ແຕກຕ່າງກັນຢ່າງມີຄວາມສຳຄັນທາງສະຖິຕິທີ່ລະດັບ 0.05.

3) ປຽບທຽບຄວາມຄິດເຫັນຂອງຜູ້ບໍລິຫານ ແລະ ຄູສອນ ກ່ຽວກັບການບໍລິຫານວຽກງານວິຊາການຂອງໂຮງຮຽນມັດທະຍົມສົມບູນ ພາຍໃນເມືອງເລົ່າງາມ ແຂວງສາລະວັນໃນ 5 ດ້ານ ໂດຍຈຳແນກຕາມວຸດທິການສຶກສາພົບວ່າ: ຜູ້ບໍລິຫານ ແລະ ຄູສອນ ທີ່ມີວຸດທິການສຶກສາແຕກຕ່າງກັນ ມີຄວາມຄິດເຫັນກ່ຽວກັບການບໍລິຫານວຽກງານວິຊາການ ຂອງໂຮງຮຽນມັດທະຍົມສົມບູນ ພາຍໃນເມືອງເລົ່າງາມ ແຂວງສາລະວັນ ແຕກຕ່າງກັນ ຢ່າງມີຄວາມສຳຄັນທາງສະຖິຕິທີ່ລະດັບ 0.05.

4) ປຽບທຽບຄວາມຄິດເຫັນຂອງຜູ້ບໍລິຫານ ແລະ ຄູສອນ ກ່ຽວກັບການບໍລິຫານວຽກງານວິຊາການຂອງໂຮງຮຽນມັດທະຍົມສົມບູນ ພາຍໃນເມືອງເລົ່າງາມ ແຂວງສາລະວັນໃນ 5 ດ້ານ ໂດຍຈຳແນກຕາມປະສົບການພົບວ່າ: ມີຄວາມຄິດເຫັນແຕກຕ່າງກັນ ຢ່າງມີຄວາມສຳຄັນທາງສະຖິຕິທີ່ລະດັບ 0.05. ຄື:

**ໃນດ້ານຫຼັກສູດ** ຜູ້ບໍລິຫານ ແລະ ຄູສອນ ທີ່ມີປະສົບການໃນການເຮັດວຽກ 6-11 ປີ ມີຄວາມຄິດເຫັນກ່ຽວກັບການບໍລິຫານວຽກງານວິຊາການຫຼາຍກວ່າຜູ້ບໍລິຫານ ແລະ ຄູສອນ ທີ່ມີປະສົບການໃນການເຮັດວຽກ ແລະ ຕ່ຳກວ່າ 5 ປີ ແລະ 12 ປີຂຶ້ນໄປ.

**ໃນດ້ານການຮຽນ-ການສອນ** ຜູ້ບໍລິຫານ ແລະ ຄູສອນ ທີ່ມີປະສົບການໃນການເຮັດວຽກ 12 ປີຂຶ້ນໄປ. ມີຄວາມຄິດເຫັນກ່ຽວກັບການບໍລິຫານວຽກງານວິຊາການຫຼາຍກວ່າຜູ້ບໍລິຫານ ແລະ ຄູສອນ ທີ່ມີປະສົບການໃນການເຮັດວຽກ 6-11 ປີ ແລະ ຕ່ຳກວ່າ 5 ປີ.

**ໃນດ້ານສື່ການຮຽນ-ການສອນ** ຜູ້ບໍລິຫານ ແລະ ຄູສອນ ທີ່ມີປະສົບການໃນການເຮັດວຽກ 6-11 ປີ ແລະ 12 ປີຂຶ້ນໄປ ມີຄວາມຄິດເຫັນກ່ຽວກັບການບໍລິຫານວຽກງານວິຊາການຫຼາຍກວ່າຜູ້ບໍລິຫານ ແລະ ຄູສອນ ທີ່ມີປະສົບການໃນການເຮັດວຽກ ຕ່ຳກວ່າ 5 ປີ.

**ໃນດ້ານວັດ ແລະ ປະເມີນຜົນ** ຜູ້ບໍລິຫານ ແລະ ຄູສອນ ທີ່ມີປະສົບການໃນການເຮັດວຽກ 6-11 ປີ ແລະ 12 ປີຂຶ້ນໄປ ມີຄວາມຄິດເຫັນກ່ຽວກັບການບໍລິຫານວຽກງານວິຊາການຫຼາຍກວ່າຜູ້ບໍລິຫານ ແລະ ຄູສອນ ທີ່ມີປະສົບການໃນການເຮັດວຽກຕ່ຳກວ່າ 5 ປີ.

**ໃນດ້ານການນິເທດພາຍໃນ** ຜູ້ບໍລິຫານ ແລະ ຄູສອນ ທີ່ມີປະສົບການໃນການເຮັດວຽກ 12 ປີຂຶ້ນໄປມີຄວາມຄິດເຫັນກ່ຽວກັບການບໍລິຫານວຽກງານວິຊາການຫຼາຍກວ່າຜູ້ບໍລິຫານ ແລະ ຄູສອນ ທີ່ມີປະສົບການໃນການເຮັດວຽກ ຕ່ຳກວ່າ 5 ປີ ແລະ 6-11 ປີ.

### 5.1.3 ສະຫຼຸບຜົນການວິເຄາະຂໍ້ມູນ ແນວທາງການແກ້ໄຂວຽກງານບໍລິຫານໂຮງຮຽນ

**1. ດ້ານຫຼັກສູດ** 1. ຄວນແນະນຳໃຫ້ຄູແຕ່ງແຜນການສອນໃຫ້ສອດຄ່ອງຕາມຫຼັກສູດຂອງກະຊວງສຶກສາທິການ ແລະ ກິລາກຳນົດໄວ້. ນອກຈາກນັ້ນ, ຕ້ອງໄດ້ມີການຈັດກອງປະຊຸມຝຶກອົບຮົມ, ສຳມະນາ, ແລກປ່ຽນບົດຮຽນເຊິ່ງກັນ ແລະກັນ ຢ່າງເປັນປົກກະຕິ, 2. ຄວນໃຫ້ມີການກວດກາເບິ່ງຄວາມເໝາະສົມຂອງຫຼັກສູດໃນແຕ່ລະວິຊາຮຽນໃຫ້ແທດເໝາະກັບສະພາບການຮຽນ-ການສອນ, ແຕ່ລະຊັ້ນຮຽນ.

**2. ດ້ານການຮຽນ-ການສອນ** 1. ຄວນຈັດຄູສອນໃຫ້ເໝາະສົມກັບວິຊາສະເພາະທີ່ຮຽນຈົບມາ ແລະ ຈັດໃຫ້ມີການສອນແທນກໍລະນີຄູສອນປະຈະວິຊາບໍ່ໄດ້ຂຶ້ນຫ້ອງສອນ, 2. ຜູ້ບໍລິຫານຕ້ອງໄດ້ເອົາໃຈໃສ່ຕື່ມໂດຍສະເພາະແມ່ນການຈັດຝຶກອົບຮົມຄູໃນແຕ່ລະປີ ເພື່ອໃຫ້ຄູໄດ້ເອົາໃຈໃສ່ພັດທະນາທາງດ້ານການຈັດການຮຽນ-ການສອນທີ່ຫຼາກຫຼາຍຮູບແບບ, ສິ່ງສຳຄັນການຈັດການຮຽນ-ການສອນຄູຕ້ອງຖືເອົານັກຮຽນເປັນໃຈກາງ ເພື່ອເປັນອິດສະຫຼະໃນການຮຽນຮູ້ຂອງນັກຮຽນ.

**3. ດ້ານສື່ການຮຽນ-ການສອນ** 1. ຄູແຕ່ລະຄົນກ່ອນຈະຂຶ້ນຫ້ອງສອນແຕ່ລະຄັ້ງ ຕ້ອງໄດ້ກະກຽມສື່ການຮຽນ-ການສອນ ແລະ ຜະລິດສື່ການຮຽນ-ການຮຽນໃຫ້

ຫຼາກຫຼາຍ ແລະ ສອດຄ່ອງກັບສະພາບປັດຈຸບັນ ແລະ ທ້ອງຖິ່ນ, 2. ໂຮງຮຽນຕ້ອງໄດ້ສຶກສາຄວາມຕ້ອງການ, ຂຶ້ນແຜນຈັດຊື້, ຈັດສັນງົບປະມານ ແລະ ສະໜອງດ້ານສື່ການຮຽນ-ການສອນ ໃຫ້ພຽງພໍ, 3. ຄວນຈັດໃຫ້ມີຫ້ອງທົດລອງ, ຫ້ອງສະໝຸດ, ຫ້ອງຮຽນຄອມພິວເຕີ ເພື່ອເຮັດໃຫ້ເກີດການຮຽນຮູ້ໄດ້ງ່າຍຂຶ້ນ.

**4. ດ້ານວັດ ແລະ ປະເມີນຜົນ** 1. ຄູຄວນໃຊ້ວິທີການວັດ ແລະ ປະເມີນຫຼາຍຮູບແບບຕາມຄວາມເໝາະສົມຂອງແຕ່ລະບົດ, ຄູຄວນກວດກາປະຈຳເດືອນໃຫ້ທັນກັບເວລາ , 2. ຄູຄວນມີການປະເມີນກ່ອນ ແລະ ຫຼັງການຮຽນທຸກຄັ້ງ ແລະ ແຈ້ງຜົນການປະເມີນໃຫ້ນັກຮຽນຮູ້ເພື່ອໃຫ້ນັກຮຽນ ຫຼື ຄູໄດ້ມີການປັບປຸງໃຫ້ດີຂຶ້ນເທື່ອລະກ້າວ

**5. ດ້ານການນິເທດພາຍໃນ** 1. ໂຮງຮຽນຕ້ອງຈັດໃຫ້ມີການນິເທດພາຍໃນທຸກໆ 3 ເດືອນ ຫຼື ພາກຮຽນລະ 1 ຄັ້ງໝາຍເຖິງປີລະ 2 ຄັ້ງຂອງແຕ່ລະລາຍວິຊາເຂົ້າໃນແຜນປະຈຳປີຂອງໂຮງຮຽນ ເພື່ອຖອດຖອນປັບປຸງການຮຽນ-ການສອນແຕ່ລະວິຊາໃຫ້ດີຂຶ້ນ ແລະ ສອດຄ່ອງກັບການຮຽນ-ການສອນໃນປະຈຸບັນ, 2. ໂຮງຮຽນຕ້ອງສົ່ງເສີມໃຫ້ຄູສອນໄດ້ເຂົ້າຮ່ວມໂມງສອນ ເຊິ່ງກັນ ແລະ ກັນໃຫ້ຫຼາຍຂຶ້ນ ແລະ ເປັນປະຈຳ ເພື່ອຖອດຖອນບົດຮຽນ ເຊິ່ງກັນ ແລະ ກັນໃນສາຍວິຊາ ແກ້ໄຂຈຸດອ່ອນ ແລະ ສົ່ງເສີມດ້ານດີ.

**6. ເອກະສານອ້າງອີງ**


ກະຊວງສຶກສາທິການ ແລະ ກິລາ .( 2020). ແຜນທະນາຂະແໜງການການສຶກສາ ແລະ ກິລາ 5 ປີ ຄັ້ງທີ IX (2021-2025) ນະຄອນຫຼວງວຽງຈັນ: ກະຊວງສຶກສາທິການ ແລະ ກິລາ.

ກະຊວງສຶກສາທິການ ແລະ ກິລາ .(2021). ບົດສະຫຼຸບການຈັດຕັ້ງປະຕິບັດ ແຜນພັດທະນາການສຶກສາ ແລະ ກິລາ ປະຈຳສົກຮຽນ 2020-2021 ແລະ ແຜນພັດທະນາການສຶກສາ ແລະ ກິລາ ປະຈຳສົກຮຽນ 2021-2022.

ຄຳຫຼ້າ ອຸດົມສິນ .(2010). ສະພາບ ແລະ ບັນຫາການບໍລິຫານງານວິຊາການ ຂອງໂຮງຮຽນມັດທະຍົມສົມບູນ ໃນເຂດນະຄອນຫຼວງວຽງຈັນ.

ຄຳພູໄທ ນອນລະຫົງ .(2014). ການບໍລິຫານວຽກງານວິຊາການໃນວິທະຍາໄລເຕັກນິກ ແຂວງວຽງຈັນ. ຄະນະສຶກສາສາດ ມະຫາວິທະຍາໄລແຫ່ງຊາດລາວ.

ບຸນຄົງ ພົມມະວົງ .(2015). ການບໍລິຫານວິຊາການຂອງວິທະຍາໄລສົງ ໃນ ສປປ ລາວ. ຄະນະສຶກສາສາດ ມະຫາວິທະຍາໄລແຫ່ງຊາດລາວ.

ປິຍະພັນ ສິລິຣັກ .(2562). ການບໍລິຫານງານວິຊາການ ຂອງໂຮງຮຽນສັງກັດສຳນັກງານເຂດບາງບອນ. ກຸງເທບມະຫານະຄອນ. ມະຫາວິທະຍາໄລສະຫຍາມ.

ພິມໃຈ ພຸດຈັດຕຸລັດ .(2562). ການບໍລິຫານງານວິຊາການຂອງໂຮງຮຽນ ສັງກັດສຳນັກງານການສຶກສາພາກ 1. ມະຫາວິທະຍາໄລລາດສະພັດຈຸລາລົງກອນ ໃນພະບໍລົມຊູປະຖຳ. ປະທຸມທານີ.